ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110



# ກອງປະຊຸມຄະນະກຳມະການອາວຸໂສລະດັບສູງ ພາຍໃຕ້ການເຊື່ອມໂຍງຂະແໜງການເງິນ-ເງິນຕາອາຊຽນ ຄັ້ງທີ 28 ແລະ ກອງປະຊຸມປິ່ນອ້ອມ (ASEAN Senior Level Committee: SLC on Financial Integration and Related Meeting), ທີ່ ດານັງ ສສ. ຫວຽດນາມ




ໃນລະຫວ່າງວັນທີ 19-20 ກັນຍາ 2024, ທ່ານ ສຸລິວັດ ສຸວັນນະຈູມຄຳ, ຮອງຜູ້ວ່າການ ທຫລ ພ້ອມດ້ວຍຄະນະ ໄດ້ສຳເລັດການປະຕິບັດພັນທະຂອງ ສປປ ລາວ ໃນການເຂົ້າຮ່ວມກອງປະຊຸມຄະນະກຳມະການອາວຸໂສລະດັບສູງພາຍໃຕ້ການເຊື່ອມໂຍງຂະແໜງການເງິນ-ເງິນຕາ ອາຊຽນ ຄັ້ງທີ 28 ແລະ ກອງປະຊຸມປິ່ນອ້ອມ (ASEAN Senior Level Committee: SLC on Financial Integration and Related Meeting), ທີ່ ດານັງ ສສ ຫວຽດນາມ ໂດຍມີບັນດາຮອງຜູ້ວ່າການທະນາຄານກາງຂອງປະເທດສະມາຊິກອາຊຽນ ພ້ອມດ້ວຍຄະນະ, ກອງເລຂາອາຊຽນ ແລະ ຍັງມີຜູ້ຕາງໜ້າຈາກອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງເຂົ້າຮ່ວມເປັນຕົ້ນແມ່ນທະນາຄານເພື່ອການຊຳລະສາກົນ, ອົງການຄົ້ນຄວ້າເສດຖະກິດມະຫາພາກອາຊຽນ+3, ທະນາຄານພັດທະນາອາຊີ ແລະ ອົງການເຄືອຂ່າຍການຮ່ວມມືຂອງທະນາຄານກາງໃນພາກພື້ນອາຊີຕາເວັນອອກສຽງໃຕ້.

ກອງປະຊຸມ SLC ແລະ ກອງປະຊຸມປິ່ນອ້ອມ ເປັນກອງປະຊຸມຕໍ່ເນື່ອງ ຊຶ່ງຈັດຂຶ້ນເປັນວາລະປົກກະຕິ 2 ຄັ້ງຕໍ່ປີ ໂດຍມີທະນາຄານແຫ່ງລັດ ຫວຽດນາມ ແລະ ທະນາຄານກາງ ອິນໂດເນເຊຍ ຮັບໜ້າທີ່ເປັນປະທານຮ່ວມໃນໄລຍະປີ 2024-2026. ຈຸດປະສົງເພື່ອຮັບຟັງການລາຍງານ ແລະ ແລກປ່ຽນທັດສະນະຂອງຂັ້ນການນຳລະຫວ່າງທະນາຄານກາງຂອງອາຊຽນກ່ຽວກັບສະພາບເສດຖະກິດມະຫາພາກຂອງພາກພື້ນ ໂດຍໄດ້ສະແດງໃຫ້ເຫັນການຂະຫຍາຍຕົວ GDP ຂອງອາຊຽນຈະມີທ່າອ່ຽງເພີ່ມຂຶ້ນຢູ່ລະດັບ 4.7-4.9%. ສຳລັບ ສປປ ລາວ ແມ່ນ 4.6% ເຫັນວ່າເພີ່ມຂຶ້ນເມື່ອທຽບປີ 2023 ແມ່ນ 4.2%. ການຄາດຄະເນໃນລະດັບອັດຕາເງິນເຟີ້ປີ 2024 ຂອງອາຊຽນຍັງຢູ່ໃນລະດັບສູງ 6.3% ທຽບກັບປີ 2023 ແມ່ນ 8% ແລະ ຄາດວ່າປີ 2025 ອັດຕາເງິນເຟີ້ຈະສືບຕໍ່ຫຼຸດລົງທີ່ 4.9% ຕົ້ນຕໍມາຈາກປັດໄຈພາຍນອກເຊັ່ນ: ການຂະຫຍາຍການສົ່ງອອກຂອງສິນຄ້າ ແລະ ການຟື້ນຟູຈາກຂະແໜງການທ່ອງທ່ຽວ.ເຖິງຢ່າງໃດກໍ່ດີ

ສະມາຊິກຍັງຈະສືບຕໍ່ຮັດແໜ້ນສາຍພົວພັນການຮ່ວມມືລະຫວ່າງກັນຢ່າງມີສະຖຽນລະພາບໃຫ້ຫຼາຍກວ່າເກົ່າ ເປັນຕົ້ນການປັບປຸງນະໂຍບາຍເງິນຕາເພື່ອຮັບມືກັບຄວາມບໍ່ແນ່ນອນຂອງສະພາບການໂລກ ແລະ ຄວາມບໍ່ຄົງທີ່ທາງດ້ານພູມສັນຖານທາງການເມືອງ.







ນອກຈາກນັ້ນ, ທີ່ປະຊຸມໄດ້ຮັບຟັງການຈັດຕັ້ງປະຕິບັດຕາມບົດລາຍງານຄວາມຄືບໜ້າຂອງບັນດາຄະນະກຳມະການທັງໝົດ (Working Committees) ແລະ ໜ່ວຍງານຕ່າງໆ (Task Force) ພາຍໃຕ້ຄະນະກຳມະການ SLC ໂດຍສະເພາະຄວາມຄືບຫນ້າການຈັດຕັ້ງແຜນວຽກບູລິມະສິດປະຈຳປີ 2024 ແລະ ການກຳນົດແຜນປີ 2025, ລວມທັງການຊຸກຍູ້ໃຫ້ສືບຕໍ່ເອົາໃຈໃສ່ແຜນວຽກທີ່ຄົງຄ້າງ ແລະ ບັນດາຍຸດທະສາດທີ່ເປັນບູລິມະສິດ ໃນການພັດທະນາເຄື່ອງມືທາງການເງິນ ທີ່ຕິດພັນກັບວຽກງານທະນາຄານໃຫ້ບັນລຸຕາມຄາດໝາຍທີ່ກຳນົດ ກໍ່ຄືໃຫ້ສອດຄ່ອງຕາມແຜນພັດທະນາຍຸດທະສາດປະຊາຄົມເສດຖະກິດອາຊຽນຫຼັງປີ 2025 ເພື່ອໃຫ້ວຽກງານການເງິນ-ທະນາຄານ ສາມາດເຊື່ອມໂຍງເຂົ້າກັນຫຼາຍຂຶ້ນໃນທ່າມກາງສະພາບການເໜັງຕີງ ແລະ ຄວາມບໍ່ແນ່ນອນຂອງການເງິນໃນໂລກ.

ກອງປະຊຸມ SLC ຄັ້ງທີ 28 ແລະ ກອງປະຊຸມປີ່ນອ້ອມ ໄດ້ດຳເນີນເປັນເວລາ 2 ວັນເຕັມ ດ້ວຍບັນຍາກາດອັນຟົດຟື້ນ ແລະ ເຕັມໄປດ້ວຍຜົນສຳເລັດ. ພ້ອມນັ້ນ, ທະນາຄານກາງ ມາເລເຊຍ ຍັງໄດ້ສະແດງຄວາມຍິນດີຕ້ອນຮັບບັນດາຜູ້ແທນທັງໝົດໃນກອງປະຊຸມຕໍ່ກັບການກະກຽມເປັນເຈົ້າພາບຈັດກອງປະຊຸມ SLC ຄັ້ງຕໍ່ໄປ ແລະ ໄດ້ຂໍການສະໜັບສະໜູນ ຕໍ່ກັບບັນດາຂໍ້ລິເລີ່ມຈາກປະເທດອາຊຽນໃນໄລຍະການຮັບໜ້າທີ່ເປັນປະທານ ແລະ ເຈົ້າພາບກອງປະຊຸມອາຊຽນ ໃນປີ 2025 ຕໍ່ຈາກ ສປປ ລາວເພື່ອສືບຕໍ່ຂະຫຍາຍການຮ່ວມມືທາງການເງິນໃຫ້ແໜ້ນແຟ້ນກວ່າເກົ່າ.

**# ຂ່າວ-ພາບ: ກົມຮ່ວມມືສາກົນ, ທະນາຄານແຫ່ງ ສປປ ລາວ.**

**ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ**